# ກອງປະຊຸມຜູ້ບໍລິຫານ ອາຊີວະສຶກສາ ທົ່ວປະເທດ ປະຈຳປີ 2022









ກອງປະຊຸມ ຜູ້ບໍລິຫານອາຊີວະສຶກສາ ສົກຮຽນ 2022-2023 ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າຂອງວັນພຸດ, ວັນທີ 25 ມັງກອນ 2023 ທີ່ຫ້ອງປະຊຸມສູນຝຶກອົບຮົມສູນກາງແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ໂດຍການ ໃຫ້ກຽດເປັນປະທານຂອງ ທ່ານ ຮສ.ປອ ພຸດ ສິມມາລາວົງ, ເລຂາ ຄະນະພັກກະຊວງ, ລັດຖະມົນຕີກະຊວງ ສຶກສາທິການ ແລະ ກິລາ, ກອງປະຊຸມໃນຄັ້ງນີ້ໄດ້ມີຫົວໜ້າກົມ/ຮອງຫົວໜ້າກົມ ກະຊວງສຶກສາທິການ ແລະ ກິລາ, ຜູ້ອຳນວຍການ/ຮອງຜູ້ອຳນວຍການພ້ອມດ້ວຍວິຊາການ ສະຖາບັນ, ວິທະຍາໄລ ແລະ ໂຮງຮຽນອາຊີວະສຶກສາ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ, ເລຂາທິການສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ຜູ້ອຳນວຍການວິທະຍາໄລ ພາກເອກະຊົນ, ຊ່ຽວຊານໂຄງການຝ່າຍລາວ ແລະ ຕ່າງປະເທດ, ຮອງປະທານ ສະພາການສຶກສາພາກເອກະຊົນ, ຫົວໜ້າພະແນກ/ຮອງພະແນກ ຂອງກົມອາຊີວະສຶກສາ ແລະ ວິຊາການ ເຂົ້າຮ່ວມ ທັງໝົດ 133 ທ່ານ, ຍິງ 23 ທ່ານ.

ກອງປະຊຸມ ໄດ້ຮັບຟັງການສະເໜີເອກະສານສຳຄັນຕ່າງໆ ແລະ ທິດຊີ້ນຳຂອງທ່ານ ໝູພັນ ອຸດສາ ຄະນະພັກກະຊວງ, ຫົວໜ້າກົມອາຊີວະສຶກສາ ຄະນະປະທານກອງປະຊຸມ ໄດ້ມີຄຳເຫັນເນັ້ນໃຫ້ຜູ້ແທນກອງປະຊຸມເອົາໃຈໃສ່ຄົ້ນຄວ້າ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາໃສ່ເນື້ອໃນກອງປະຊຸມ ເພື່ອໃຫ້ບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ກອງປະຊຸມວາງໄວ້ ຊຶ່ງປະກອບມີຫົວຂໍ້ສຳຄັນດັ່ງນີ້:

1) ປົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາວຽກງານອາຊີວະສຶກສາ ສົກຮຽນ 2021-2022 ແລະ ທິດທາງ ແຜນການພັດທະນາວຽກງານອາຊີວະສຶກສາ ສົກຮຽນ 2022-2023;
2) ການແກ້ໄຂບັນຫາລັດຖະກອນຄູ ໃນສາຍອາຊີວະສຶກສາ;
3) ການຈັດຕັ້ງປະຕິບັດຫຼັກສູດອາຊີວະສຶກສາ ແລະ ການຮັບນັກຮຽນສາຍອາຊີວະສຶກສາ;
4) ຜົນການສຳຫຼວດນັກສຶກສາຮຽນຈົບ ແລະ ບາງປັດໄຈ ກະທົບຕໍ່ການເຂົ້າຮຽນອາຊີວະສຶກສາ;
5) ເຜີຍແຜ່ກອບແນວຄວາມຄິດການຈັດຕັ້ງປະຕິບັດ ການຈັດການຮຽນ-ການສອນອາຊີວະສຶກສາແບບຄວບຄູ່;
6) ການຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ.

ກອງປະຊຸມໄດ້ສິ້ນສຸດລົງ ໃນວັນທີ 26 ໃນເວລາ 16:00 ໂມງ.